# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 18 ມີນາ 2007 ( 03-18-2007 )

---

# ພຣະເຢຊູຊົງເຮັດຫຍັງແດ່ເພື່ອເຮົາ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 10:1-5, 7-15, 17-18

**ພຣະຄັມພີແຫ່ງຄວາມຈິງ:** ໃນຖານະຜູ້ລ້ຽງທີ່ດີ, ພຣະເຢຊູຊົງຮູ້ວ່າ ສິ່ງໃດເໝາະສົມ ແລະພຣະອົງຈະປົກປ້ອງ ແກະຂອງພຣະອົງ ແລະຊົງຍອມສິ້ນພຣະຊົນເພື່ອເຂົາດ້ວຍ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຈະຊ່ອຍໃຫ້ທ່ານໄດ້ຄົ້ນພົບວ່າ ພຣະເຢຊູໄດ້ຊົງເຮັດສິ່ງໃດເພື່ອພວກເຮົາໂດຍ:

- ເຂົ້າໃຈດ້ວຍຕົວຂອງທ່ານເອງແລ້ວວ່າ ທ່ານບໍ່ມີຫົນທາງທີ່ຈະຊ່ອຍແລະປ້ອງກັນຕົວເອງຈາກ ຄວາມຊົ່ວຮ້າຍແລະອັນຕລາຍທີ່ເກີດຂຶ້ນຢູ່ໃນໂລກນີ້; ແລະ
- ຍອມຮັບທີ່ຈະມີຊີວິດທີ່ຈະຮັບເອົາຜູ້ລ້ຽງທີ່ດີ ທີ່ສາມາດໃຫ້ສິ່ງທີ່ທ່ານຕ້ອງການແລະປົກປ້ອງທ່ານ ໄດ້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### ບົດນຳ:

1. ໃນຖານະທີ່ເປັນຜູ້ໃຫຍ່ແລ້ວກໍຕ້ອງຮັບຜິດຊອບທັງສອງຢ່າງຄື: ປະຈຸບັນ ແລະອະນາຄົດ.
2. ຂຽນສິ່ງທີ່ຕອບສນອງພວກເຮົາໄດ້ເຊັ່ນຕົວຢ່າງ: "**ປະກັນພັຍ**" "**ການລົງທຶນ**" **ສ້າງເງິນຣະບົບຄວາມປອດພັຍ**" **ໂທຣະສັບມືຖື**" ໃສ່ກະດານ ແລ້ວນຳມາສົນທະນາກັນວ່າ ແຕ່ລະຢ່າງມີປໂຍດຫຍັງໃຫ້ແກ່ພວກເຮົາ?

**1. ພຣະອົງຊົງນຳພາຂ້າພະເຈົ້າ:** ( ໂຢຮັນ 10:1-5)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ໂຢຮັນ 10:1-5

2) ບາງທີ ແກະຢູ່ໃນຄອກກໍຕໍ່ສູ້ແລະແຕກກະຈັດກະຈາຍໄປ ເພາະດ້ວຍເຫດໃດ? ຈົ່ງຊ່ອຍກັນຂຍາຍຄວາມແຕກຕ່າງ ຣະຫວ່າງຂະໂມຍ ກັບ ຄົນປຸ້ນຈີ້ນັ້ນເຂົາມາແບບໃດ?

3) ປຽບທຽບລະຫວ່າງຂະໂມຍ ແລະ ຄົນປຸ້ນຈີ້ ທີ່ພຣະເຢຊູໃຫ້ເປັນຕົວຢ່າງໃນການເຂົ້າໄປໃນຄອກແກະແລະນຳແກະອອກໄປນັ້ນມີຄວາມແຕກຕ່າງກັນ ແລ້ວໃຊ້ແກະເປັນວັດຖຸປະສົງ. ຖາມວ່າເປັນຫຍັງພຣະເຢຊູຈຶ່ງໃຊ້ແກະມາປຽບທຽບ?

4) ໜ້າສົນໃຈວ່າເປັນຫຍັງພຣະເຢຊູຈຶ່ງຮູ້ຊື່ຂອງທຸກຄົນໃນມວນມະນຸດເຮົາ? ລອງມາສົນທະນາກັນໃນເຣື່ອງນີ້ເບິ່ງດູ!

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> ໂຢຮັນ 10:1-5

1. ພວກຂະໂມຍ, ພວກປຸ້ນ ແລະພວກອັນຕະພານນັ້ນເຂົາຕ້ອງການຈະເຮັດກັບຝູງແກະນັ້ນແນວໃດ?
2. ໂລກນີ້ໄດ້ກະທຳກັບພວກເຮົາເໝືອນກັບເຂົາທຳກັບຝູງແກະນັ້ນຫລືບໍ່?
3. ເປັນຫຍັງພວກເຮົາຈຶ່ງນຳພາລູກ ໆ ຂອງພວກເຮົາດ້ວຍການເອົາໃຈໃສ່ເປັນພິເສດ?
4. ເປັນດ້ວຍເຫດໃດພວກເຮົາຈຶ່ງຕ້ອງເຊື່ອວາງໃຈໃນການນຳພາຂອງຜູ້ປະກາດພຣະທັມວ່າເພິ່ນນຳພາເຮົາໄປບ່ອນທີ່ປອດພັຍດີ?
5. ໃນເມື່ອພວກເຮົາໄດ້ຍິນສຽງຂອງພຣະເຢຊູຄຣິດແລ້ວພວກເຮົາສົມຄວນເຮັດຢ່າງໃດ?
6. ໃນເມື່ອໄດ້ຍິນສຽງຂອງພວກອັນຕະພານພວກເຮົາຈະເຮັດແນວໃດ?

## 2. <u>ພຣະອົງຊົງປະທານຊີວິດ:</u> (ໂຢຮັນ 10:7-10

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 10:7-10

2) ພຣະຄັມພີໄດ້ສອນວ່າພຣະເຢຊູເປັນທາງນັ້ນ ພຣະອົງນັ້ນແຫລະເປັນທາງດຽວ.

3) ຖ້າປະຕູເປີດ, ປິດ ທັງສອງນີ້ວ່າແມ່ນໃຜເປັນຜູ້ເປີດ ແລະປິດ? <u>**ຕົວຢ່າງ:**</u> ຜູ້ນຶ່ງເຊື່ອດ້ວຍຄວາມບໍ່ເຕັມໃຈ ອີກຜູ້ນຶ່ງເຊື່ອດ້ວຍຄວາມຈິງໃຈ, ໃນລະຫວ່າງສອງຄົນນີ້ແມ່ນໃຜເປັນຜູ້ເປີດປະຕູ?

4) ໃນພຣະທັມຕອນນີ້ພຣະເຢຊູໄດ້ອວຍພອນຜູ້ທີ່ກ້າວເຂົ້າໃນປະຕູຂອງພຣະອົງຢ່າງຫລວງຫລາຍ.

5) ປະຕູຂອງພຣະອົງເປັນປະຕູແຫ່ງຄວາມລອດພົ້ນ ແລະເປັນປະຕູແຫ່ງຊີວິດ.

6) ມີຫຍັງແດ່ທີ່ພຣະເຢຊູຊົງເຮັດເພື່ອພວກເຮົາ?

7) ການມີຊີວິດທີ່ອຸດົມສົມບູນມີຄວາມໝາຍຢ່າງໃດ?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> ໂຢຮັນ 10:7-10

1. ຊີວິດແບບໃດທີ່ພຣະເຢຊູຕ້ອງການຢາກໃຫ້ພວກເຮົາມີ?
2. ຊີວິດທີ່ມີສຸຂພາບດີກັບຊີວິດທີ່ມີຄຸນຄ່າມີຄວາມແຕກຕ່າງກັນຢ່າງໃດ?
3. ການທີ່ພຣະເຢຊູເປັນປະຕູ ແລະພຣະອົງຈະນຳພາພວກເຮົານັ້ນໃຫ້ຄວາມແນ່ໃຈແກ່ທ່ານຫລືບໍ່?

## 3. <u>ພຣະອົງຊົງສລະຊີວິດຂອງພຣະອົງເພື່ອຂ້າພະເຈົ້າ:</u> ໂຢຮັນ 10: 11-15,17-18

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ປະຖົມມະການ ໂຢຮັນ 10:11-15, 17-18

2) ແບບຢ່າງຂອງການນຳພາຂອງຂະໂມຍ, ຄົນອັນຕະພານ ແລະຄົນຂີ້ລັກບໍ່ເປັນຜູ້ນຳພາທີ່ດີ

3) ແມ່ນໃຜເປັນຜູ້ດຽວທີ່ສາມາດນຳພາພວກເຮົາໄດ້? ພຣະເຢຊູຄຣິດເຈົ້າຊົງຈະນຳພາໄພຣພົນຂອງພຣະອົງໄປໄກປານໃດ?

4) ການສິ້ນພຣະຊົນຂອງພຣະອົງບໍ່ປະຖິ້ມການຄຸ້ມຄອງພວກເຮົາບໍ?

5) ອ່ານພຣະທັມໂຣມ 8:31-32. ແລ້ວອະທິບາຍເຫດຜົນໃນຂໍ້ນີ້, ຜູ້ທີ່ເຊື່ອທັງຫລາຍໄດ້ກາຍມາເປັນຜູ້ເຊື່ອໝັ້ນໃນການນຳພາຂອງພຣະເຢຊູຫລາຍຂຶ້ນບໍ່?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> ໂຢຮັນ 10:11-15, 17-18

1. ພຣະເຢຊູຄຣິດໄດ້ຊົງສຳແດງພຣະອົງເອງຢ່າງໃດແດ່?
2. ຜູ້ລ້ຽງທີ່ດີໄດ້ເຮັດຫຍັງແດ່?

3. ພວກເຮົາຈະຮູ້ຈັກພຣະເຢຊູຄຣິດໄດ້ຢ່າງໃດ?

4. ພວກເຮົາຈະໃຫ້ພຣະອົງຮູ້ຈັກພວກເຮົາຢ່າງໃດແດ່? ການທີ່ພຣະເຢຊູຮູ້ຈັກທ່ານນັ້ນເປັນການເລົ້າໂລມຫລືໄດ້ເຮັດໃຫ້ທ່ານມີຄວາມຢ້ານກົວ?

5) ເປັນຫຍັງພຣະເຢຊູຈິ່ງສິ້ນພຣະຊົນ?

**<u>ສລູບ</u>:**

**<u>ຈົດຈໍ່ຢູ່ໃນບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>**

✍ເພາະວ່າພຣະເຢຊູຊົງເອົາໃຈໃສ່ດູແລໄພ່ພົນຂອງພຣະອົງໂດຍສ່ວນຕົວຂອງພຣະອົງເອງ, ເປັນຜູ້ນຳພາພວກເຮົາທັ້ງລະຍະສັ້ນແລະລະຍະຍາວ, ພວກເຮົາຄວນຕິດຕາມໄປ ຕາມການຊົງນຳຂອງພຣະອົງ.

✍ເພາະວ່າພຣະເຢຊູຊົງເອົາໃຈໃສ່ດູແລໄພ່ພົນຂອງພຣະອົງໂດຍ ໃຫ້ຊີວິດອັນອຸດົມສົມບູນແກ່ພວກເຮົາ, ພວກເຮົາຄວນຂຍັນໝັ່ນພຽນເຂົ້າຢູ່ໃກ້ຊິດພຣະອົງ.

✍ເພາະວ່າພຣະເຢຊູໄດ້ຊົງສະລະຊີວິດເພື່ອພວກເຮົາໃຫ້ລອດພົ້ນ, ພວກເຮົາຄວນດຳເນີນຊີວິດຢູ່ໃນຄວາມເຊື່ອເພື່ອຮັບໃຊ້ພຣະອົງ....ອາແມນ!

✍ໜູນໃຈໃຫ້ນັກຮຽນໃຊ້ເວລາກັບບົດຮຽນແຫ່ງຊີວິດໃນອາທິດນີ້ເພີ້ມເຕີມ.

✍ໃຊ້ເວລາອະທິຖານຂໍໃຫ້ຕົວເອງເປັນແກະຂອງພຣະເຢຊູຄຣິດ.

✍ອະທິຖານປິດຫ້ອງຮຽນ.

*ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ: ແປແລະຮຽບຮຽງໂດຍ j.h.*